ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ PWT

ກະຊວງ ໂຍທາທິການ ແລະ ຂົນສົ່ງ ເລກທີ: 538 /ຍທຂ

ນະຄອນຫຼວງວຽງຈັນ, ວັນທີ: 31-5-2019

ຮຽນ : ທ່ານ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ທີ່ນັບຖື.

ເລື່ອງ: ແຈ້ງຕອບຕໍ່ຄຳສະເໜີຂອງປະຊາຊົນ ທີ່ມີຕໍ່ຂະແໜງການ ຍທຂ ຜ່ານໂທລະສັບ ສາຍດ່ວນລັດຖະບານ.

- ອີງຕາມໜັງສືທາງລັດຖະການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ; ເລກທີ 716/ຫສນຍ, ລົງວັນທີ 23/11/2018; ເລກທີ 735/ຫສນຍ, ລົງວັນທີ 11/12/2018; ເລກທີ 0797/ຫສນຍ, ລົງວັນທີ 26/12/2018; ເລກທີ 164/ຫສນຍ, ລົງວັນທີ 12/4/2019;

ກະຊວງໂຍທາທິການ ແລະຂົນສົ່ງ ຂໍຖືເປັນກຽດລາຍງານມາຍັງທ່ານຊາບ ກ່ຽວກັບການຕອບ ຄຳສະເໜີຂອງປະຊາຊົນ ທີ່ມີຕໍ່ຂະແໜງການ ຍທຂ ຜ່ານໂທລະສັບສາຍດ່ວນລັດຖະບານ ຕາມທີ່ໄດ້ປະສານນຳພາກສ່ວນກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ມີລາຍລະອຽດລຸ່ມນີ້:

1. *ປະຊາຊົນນະຄອນຫລວງວຽງຈັນ ສ່ອງແສງໃຫ້ລັດຖະບານຮູ້ ລາຄາປີ້ລົດໂດຍສານສາຍເໜືອ-ສາຍໃຕ້ ປັບຂຶ້ນລາຄາ ເຮັດໃຫ້ປະຊາຊົນຜູ້ທີ່ໄປໃຊ້ບໍລິການ ໃນຊ່ວງບຸນປີໃໝ່ລາວ ໄດ້ຮັບຄວາມເດືອດຮ້ອນ, ດັ່ງນັ້ນ, ຂໍໃຫ້ພາກສ່ວນກ່ຽວຂ້ອງ ຊ່ວຍກວດກາ ແລະ ແກ້ໄຂບັນຫາດັ່ງກ່າວດ້ວຍ.*

- **ຕອບ:** ເຟສບຸກຂ່າວ ABC Laos News ໄດ້ມີການລົງຂ່າວ (ໂພສ) ວ່າສະຖານີລົດໂດຍສານສາຍໃຕ້ ປັບຂຶ້ນລາຄາປີ້ໂດຍສານສາຍທາງນະຄອນຫລວງວຽງຈັນ-ປາກເຊ (ລົດ VIP1) ໃນຊ່ວງບຸນປີໃໝ່ລາວ ພສ 2562, ຕໍ່ບັນຫາດັ່ງກ່າວຜູ້ອຳນວຍການສະຖານີລົດໂດຍສານສາຍໃຕ້ກໍໄດ້ຊີ້ແຈງວ່າ: ບໍລິສັດຈັນທະຈອນຂົນສົ່ງໂດຍສານ ໄດ້ຂາຍປີ້ໂດຍສານຫລຸດລາຄາທີ່ລັດຖະບານກຳນົດໃຫ້ຜູ້ໂດຍສານຂາປະຈຳໃນຊ່ວງກ່ອນປີໃໝ່ລາວ ໃນລາຄາ 150.000 ກີບ/ຄົນ ຫລຸດລາຄາທີ່ກຳນົດ 20.000 ກີບ, ສ່ວນບໍລິສັດຂົນສົ່ງອື່ນແມ່ນບໍ່ໄດ້ຫລຸດລາຄາ, ຂາຍເຕັມລາຄາທີ່ລັດຖະບານກຳນົດ ຈຶ່ງເຮັດໃຫ້ຜູ້ໂດຍສານເຂົ້າໃຈວ່າເປັນການປັບຂຶ້ນລາຄາປີ້ໂດຍສານ. ແຕ່ຮອດໄລຍະຊ່ວງບຸນປີໃໝ່ມາ ບໍລິສັດດັ່ງກ່າວກໍ່ຂາຍຕາມລາຄາປົກກະຕິ 170.000 ກີບ/ຄົນ. ໃນໄລຍະຜ່ານມາ ແລະ ໃນຊ່ວງໄລຍະບຸນປີໃໝ່ລາວ ພສ 2562 ກົມຂົນສົ່ງ, ກະຊວງ ຍທຂ ໄດ້ສົມທົບກັບພະແນກ ຍທຂ ນະຄອນຫລວງ ລົງຕິດຕາມກວດກາການບໍລິການຂົນສົ່ງຜູ້ໂດຍສານ ຢູ່ ສະຖານີລົດຂົນສົ່ງໂດຍສານສະຖານີສາຍເໜືອ ແລະ ສະຖານີສາຍໃຕ້ ນະຄອນຫລວງວຽງຈັນ ເຫັນວ່າທັງສອງສະຖານນີໄດ້ເອົາໃຈໃສ່ອຳນວຍຄວາມສະດວກໃຫ້ແກ່ຜູ້ໂດຍສານ ໂດຍການເພີ່ມລົດໃຫ້ຫລາຍກວ່າຖ້ຽວປົກກະຕິ ເພື່ອບໍ່ໃຫ້ຜູ້ໂດຍສານ ຕົກຄ້າງຢູ່ສະຖານີ ແຕ່ບໍ່ໄດ້ມີການປັບຂຶ້ນລາຄາປີ້ໂດຍສານ ທັງຖ້ຽວລົດປົກກະຕິ ແລະ ຖ້ຽວລົດເພີ່ມ, ໃນທຸກສາຍທາງ ແມ່ນຂາຍປີ້ຕາມແຈ້ງການ ສະບັບເລກທີ 1435/ກຂສ, ລົງວັນທີ 11/1/2011 ຂອງກະຊວງ ຍທຂ ວາງອອກຢ່າງເຂັ້ມງວດ. ໃນຕໍ່ໜ້າ ກົມຂົນສົ່ງ ກະຊວງ ຍທຂ, ຈະໄດ້ສົມທົບກັບພາກສ່ວນກ່ຽວຂ້ອງ ຕິດຕາມ,ກວດກາ ແລະ ຊີ້ນຳພະແນກ ຍທຂ ນະຄອນຫລວງ ແລະ ແຂວງ ເອົາໃຈໃສ່ຄຸ້ມຄອງສະຖານີລົດໂດຍສານ ໃນການຂາຍປີ້ໂດຍສານຕາມລາຄາທີ່ລັດກຳນົດໃຫ້ໃນແຕ່ລະສາຍທາງ, ຖ້າບໍລິສັດ

ໃດບໍ່ປະຕິບັດຕາມລະບຽບການທີ່ກຳນົດ ຈະປະຕິບັດມາດຕະການຕາມກົດໝາຍກ່ຽວຂ້ອງກຳນົດຢ່າງເຂັ້ມງວດ

2. <u>ປະຊາຊົນ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ສະເໜີໃຫ້ລັດຖະບານຮັບຮູ້ກ່ຽວກັບບັນຫາ ການກໍ່ສ້າງເສັ້ນທາງເຂດໜອງບຶກ ຄືບໍ່ສຳເລັດຈັກເທື່ອເປັນຫຍັງພາກສ່ວນກ່ຽວຂ້ອງບໍ່ພິຈາລະນາ ໃຫ້ຢຸດ ຫຼື ໂຈະບໍລິສັດດັ່ງກ່າວ ແລະ ເປີດການປະມູນໃຫ້ບໍລິສັດໃໝ່ ທີ່ສາມາດຈັດຕັ້ງປະຕິບັດໄດ້ ຕາມແຜນການທີ່ວາງໄວ້. ຈຶ່ງຂໍໃຫ້ແກ້ໄຂດ່ວນ.</u>

➢ <u>ຕອບ:</u> ອີງຕາມການລາຍງານຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ: ນັບແຕ່ໄດ້ເຊັນສັນຍາຮັບເໝົາກໍ່ສ້າງໂຄງການໃນເດືອນ ກັນຍາ 2016 ພະແນກ ຍທຂ ນະຄອນຫຼວງວຽງຈັນ ໄດ້ຊີ້ນຳໃຫ້ບໍລິສັດຮັບເໝົາກໍ່ສ້າງເອົາໃຈໃສ່ຈັດຕັ້ງປະຕິບັດວຽກຢ່າງຕໍ່ເນື່ອງ ຈົນຮອດເດືອນ ກັນຍາ 2018 ໝົດອາຍຸສັນຍາການກໍ່ສ້າງ ແລະ ບໍລິສັດຮັບເໝົາກໍ່ສ້າງຂໍຕໍ່ສັນຍາຕື່ມ 9 ເດືອນ ຮອດເດືອນ ມິຖຸນາ 2019, ມາຮອດປະຈຸບັນສາມາດຈັດຕັ້ງປະຕິບັດວຽກໄດ້ທັງໝົດ 60,05% ທຽບໃສ່ແຜນການລວມ ແມ່ນຫລຸດ 39,95% ຊຶ່ງສາເຫດທີ່ພາໃຫ້ໂຄງການຊັກຊ້າຍ້ອນມີບັນຫາດັ່ງນີ້:

1) ການຍົກຍ້າຍສິ່ງກີດຂວາງ ທີ່ຢູ່ໃນຂອບເຂດການກໍ່ສ້າງເຊັ່ນ: ລະບົບລະບາຍນ້ຳ, ສາຍໄຍແກ້ວ, ລະບົບໄຟຟ້າ ແລະສິ່ງປຸກສ້າງຂອງປະຊາຊົນ ມີຄວາມຫຼ້າຊ້າໃຊ້ເວລາດົນໃນການໄກ່ເກ່ຍເຮັດໃຫ້ການກໍ່ສ້າງພົບຄວາມຫຍຸ້ງຍາກ;
2) ເສັ້ນທາງດັ່ງກ່າວແມ່ນເສັ້ນທາງໜຶ່ງທີ່ມີປະລິມານການສັນຈອນທີ່ໜາແໜ້ນ ໂດຍສະເພາະແມ່ນລົດບັນທຸກທີ່ນຳໃຊ້ເສັ້ນທາງດັ່ງກ່າວ ແລະເປັນໂຄງການກໍ່ສ້າງທີ່ບໍ່ມີທາງເວັ້ນ ເຮັດໃຫ້ການກໍ່ສ້າງພົບຄວາມຫຍຸ້ງຍາກ;
3) ເນື່ອງຈາກວ່າບໍລິສັດຂາດທຶນຮອນໝູນວຽນໃນການກໍ່ສ້າງ ບໍ່ສາມາດຕອບສະໜອງຕາມແຜນວຽກທີ່ກຳນົດໄວ້ ແລະ ລັດຖະບານກໍບໍ່ສາມາດຕອບສະໜອງການຊຳລະຄ່າກໍ່ສ້າງທີ່ສຳເລັດແລ້ວ ຕາມສັນຍາກຳນົດໄວ້.

ຕໍ່ບັນຫາດັ່ງກ່າວ ລັດຖະບານໄດ້ມີແຈ້ງການ ສະບັບເລກທີ: 360/ຫສນຍ, ລົງວັນທີ 4/3/2019 ໃຫ້ນະຄອນຫລວງວຽງຈັນ ສົມທົບກັບກະຊວງການເງິນ ແລະ ພາກສ່ວນກ່ຽວຂ້ອງ ຄົ້ນຄ້ວາ ແລະ ຊອກທາງອອກ ເພື່ອຊ່ວຍບໍລິສັດ ໃຫ້ສາມາດຈັດຕັ້ງປະຕິບັດໂຄງການດັ່ງກ່າວໄດ້ສຳເລັດຕາມແຜນການ.

ກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກໄດ້ລົງຕິດຕາມ ແລະຊຸກຍູ້ຢູ່ພາກສະໜາມ ທັງໄດ້ຊີ້ນຳໃຫ້ພະແນກ ຍທຂ ນະຄອນຫຼວງວຽງຈັນ ໃນນາມເຈົ້າຂອງໂຄງການເອົາໃຈໃສ່ຊີ້ນຳຊຸກຍູ້ໃຫ້ບໍລິສັດຜູ້ຮັບເໝົາກໍ່ສ້າງເລັ່ງສືບຕໍ່ໜ້າວຽກທີ່ຍັງຄ້າງຄາໃຫ້ສຳເລັດ, ພ້ອມທັງໃຫ້ປັບປຸງເສັ້ນທາງຊ່ວງທີ່ຍັງບໍ່ທັນໄດ້ກໍ່ສ້າງທີ່ໜ້າທາງເປັນບວກເປັນຂຸມນັ້ນ ກໍໃຫ້ມີການສ້ອມແປງທົດນ້ຳເປັນປົກກະຕິເພື່ອອຳນວຍຄວາມສະດວກໃຫ້ແກ່ການສັນຈອນໄປມາໄດ້ສະດວກ, ປອດໄພ.

3. <u>ປະຊາຊົນແຂວງອັດຕະປື ສ່ອງແສງໃຫ້ລັດຖະບານຮູ້ວ່າ ການກໍ່ສ້າງເສັ້ນທາງລຽບຊາຍແດນ ລາວ-ຫວຽດນາມ ແມ່ນແຜນພັດທະນາກໍ່ສ້າງເສັ້ນທາງໄລຍະຍາວ ຂອງລັດຖະບານບໍ່? ເປັນຫຍັງຈຶ່ງບໍ່ເຮັດຜ່ານປະຕູດ່ານສາກົນພູເກືອ, ປະຊາຊົນເປັນຫ່ວງຢ້ານວ່າ ຈະມີການລັກລອບຂົນສົ່ງສິນຄ້າທີ່ຜິດກົດໝາຍ ໂດຍບໍ່ໄດ້ເສຍພາສີເຂົ້າງົບປະມານຂອງລັດ ເຮັດໃຫ້ເກີດມີຊ່ອງວ່າງໃນການສໍ້ລາດ ບັງຫຼວງ.</u>

➢ <u>ຕອບ:</u> ພະແນກໂຍທາທິການ ແລະ ຂົນສົ່ງແຂວງອັດຕະປື ລາຍງານໃຫ້ຊາບວ່າ: ການກໍ່ສ້າງເສັ້ນທາງລຽບຊາຍແດນ ລາວ-ຫວຽດນາມ ແມ່ນນອນໃນແຜນການພັດທະນາພື້ນຖານໂຄງລ່າງ ຂອງລັດຖະບານ ແລະ ລັດຖະບານ ໄດ້ມອບໃຫ້ກະຊວງປ້ອງກັນປະເທດ ເປັນຜູ້ຈັດຕັ້ງປະຕິບັດ ແລະ ເປັນຜູ້ຄຸ້ມຄອງຕິດຕາມກວດກາ ເສັ້ນທາງດັ່ງກ່າວ, ສ່ວນການກຳນົດແລວທາງດັ່ງກ່າວ ໂດຍບໍ່ຜ່ານດ່ານສາກົນພູເກືອນັ້ນ ອາດຈະແມ່ນເປົ້າໝາຍຍຸດທະສາດຂອງລັດຖະບານ.

4. <u>ປະຊາຊົນ, ບ້ານນາທົ່ມ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ສະເໜີໃຫ້ລັດຖະບານຮູ້ວ່າ ນ. ອອ່ດຫອມ ປະຊາຊົນບ້ານດັ່ງກ່າວ ໄດ້ຊື້ດິນກັບພີ່ນ້ອງແຕ່ປີ 1998 ຈຳນວນ 217 ຕາແມັດ ບໍ່ມີໃບຕາດິນຖາວອນມີແຕ່ໃບນຳໃຊ້ ແລະ ເສຍພາສີທີ່ດິນຕາມລະບຽບການ (ຜ່ານມາບໍ່ຮູ້ວ່າເປັນດິນຂອງລັດ), ປະຈຸບັນແມ່ນໄດ້ຮັບຜົນ</u>

ກະທົບຈາກໂຄງການກໍ່ສ້າງທາງລົດໄຟ ແຕ່ທາງຄະນະຮັບຜິດຊອບໄດ້ແຈ້ງໃຫ້ຜູ້ກ່ຽວວ່າ ຈະບໍ່ມີການຊົດເຊີຍໃດໆໃຫ້ຜູ້ກ່ຽວ ເພາະວ່າດິນຕອນດັ່ງກ່າວແມ່ນດິນຂອງລັດ. ດັ່ງນັ້ນ, ຈຶ່ງຂໍໃຫ້ພາກສ່ວນກ່ຽວຂ້ອງກວດກາແກ້ໄຂ ແລະ ຊີ້ແຈງບັນຫາດັ່ງກ່າວໃຫ້ປະຊາຊົນດ້ວຍ.

➢ ຕອບ: ເພື່ອປະຕິບັດຕາມການກຳນົດລາຄາຫົວໜ່ວຍເບີກຈ່າຍຄ່າຊົດເຊີຍສິ່ງກີດຂວາງ ຂອງແຕ່ລະແຂວງ ແລະ ນະຄອນຫຼວງວຽງຈັນທີ່ໄດ້ຮັບການຮັບຮອງຈາກສະພາປະຊາຊົນທ້ອງຖິ່ນແລ້ວ, ລັດຖະມົນຕີກະຊວງ ຍທຂ, ຫົວໜ້າຄະນະຊີ້ນຳໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ໄດ້ອອກຂໍ້ຕົກລົງອະນຸມັດຄູ່ມືແນະນຳການເບີກຈ່າຍຄ່າຊົດເຊີຍສິ່ງກີດຂວາງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ, ສະບັບເລກທີ 12501/ຍທຂ, ລົງວັນທີ 11 ມິຖຸນາ 2018 ເພື່ອເປົ້າໝາຍນຳໃຊ້ກັບບຸກຄົນ ແລະ ການຈັດຕັ້ງ ດັ່ງນີ້:

(1) ປະຊາຊົນທີ່ເປັນເຈົ້າຂອງຊັບສິນ ທີ່ຖືກຜົນກະທົບຈາກໂຄງການທາງລົດໄຟລາວ-ຈີນ.
(2) ລວມໝູ່ທີ່ເປັນເຈົ້າຂອງຊັບສິນ ຊຶ່ງຖືກຜົນກະທົບຈາກໂຄງການທາງລົດໄຟລາວ-ຈີນ.
(3) ນິຕິບຸກຄົນທີ່ເປັນເຈົ້າຂອງຊັບສິນ ຊຶ່ງຖືກຜົນກະທົບຈາກໂຄງການທາງລົດໄຟລາວ-ຈີນ.
(4) ອົງການຈັດຕັ້ງຂອງລັດ ທີ່ເປັນເຈົ້າຂອງຊັບສິນ ຊຶ່ງຖືກຜົນກະທົບຈາກໂຄງການທາງລົດໄຟລາວ-ຈີນ.

ກົນໄກ ແລະ ຂັ້ນຕອນການເບີກຈ່າຍຕາມທີ່ລະບຸໄວ້ໃນຄູ່ມືແນະນຳສະບັບນີ້ຄື: ທີມງານຈາກບໍລິສັດທາງລົດໄຟລາວ-ຈີນ (ໃນນາມຜູ້ສຳປະທານໂຄງການ) ສົມທົບກັບຄະນະຄຸ້ມຄອງໂຄງການ, ຄະນະໄກ່ເກ່ຍຊົດເຊີຍຂອງແຂວງ ແລະ ເມືອງ, ນາຍບ້ານ, ຜູ້ທີ່ຖືກຜົນກະທົບ, ຜູ້ຮັບເໝົາກໍ່ສ້າງ ແລະ ທີ່ປຶກສາໂຄງການ ໄດ້ພ້ອມກັນລົງສຳຫຼວດພື້ນທີ່ ທີ່ຖືກກະທົບຕໍ່ການກໍ່ສ້າງທາງລົດໄຟລາວ-ຈີນຕົວຈິງ ແລ້ວສັງລວມເປັນບັນຊີແຕ່ລະປະເພດທີ່ຖືກຜົນກະທົບ ເພື່ອຄິດໄລ່ຕາມລາຄາຫົວໜ່ວຍຊົດເຊີຍ ທີ່ທ່ານເຈົ້າແຂວງອະນຸມັດ ລວມທັງໝົດເປັນມູນຄ່າທີ່ຈະຕ້ອງໄດ້ຊົດເຊີຍຂອງແຕ່ລະຄົນ ຫຼັງຈາກນັ້ນຈຶ່ງໄດ້ລົງລາຍເຊັນຢັ້ງຢືນຮ່ວມກັນ ທັງໝົດມີ 7 ຝ່າຍຄື: ຜູ້ກ່ຽວທີ່ຖືກຜົນກະທົບ, ນາຍບ້ານ, ເຈົ້າເມືອງ, ຜູ້ຮັບເໝົາກໍ່ສ້າງ, ບໍລິສັດທີ່ປຶກສາ ແລະ ບໍລິສັດທາງລົດໄຟລາວ-ຈີນ, ພາຍຫຼັງສຳເລັດ 7 ລາຍເຊັນແລ້ວແມ່ນໄດ້ສັງລວມເປັນໃບສະເໜີໃຫ້ທ່ານເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫລວງ ລົງລາຍເຊັນຮັບຮອງມູນຄ່າລວມທັງໝົດຂອງແຂວງ/ນະຄອນຫຼວງ ເພື່ອນຳສະເໜີຫາທ່ານ ລັດຖະມົນຕີກະຊວງ ຍທຂ ອະນຸມັດໂອນເງິນເປັນແຕ່ລະງວດທີ່ມີເອກະສານຖືກຕ້ອງຄົບຖ້ວນຕາມທີ່ກຳນົດໃນຄູ່ມື ຈຶ່ງໂອນເງິນຄ່າຊົດເຊີຍດັ່ງກ່າວໄປຫາຄະນະກຳມະການໄກ່ເກ່ຍຂັ້ນແຂວງ/ນະຄອນຫລວງເປັນຜູ້ຈັດຕັ້ງການເບີກຈ່າຍໃຫ້ຜູ້ຖືກຜົນກະທົບ ໂດຍຜ່ານທະນາຄານທຸລະກິດ.

ມາຮອດປັດຈຸບັນນີ້, ວຽກງານການຊົດເຊີຍໄດ້ດຳເນີນການມາທັງໝົດແລ້ວຈຳນວນ 5 ຄັ້ງ, ລວມ 1.204 ຄອບຄົວ, ມູນຄ່າຊົດເຊີຍທັງໝົດ 364.569.917.765 ກີບ, ຊຶ່ງການຊົດເຊີຍໃນໄລຍະຜ່ານມາ ແມ່ນໄດ້ເລັ່ງໃສ່ເຂດບ້ານເຮືອນປະຊາຊົນ ທີ່ຍັງບໍ່ທັນສາມາດມອບພື້ນທີ່ໃຫ້ແກ່ການກໍ່ສ້າງໄດ້.

ສຳລັບການສະເໜີຂອງ ນ. ອອ່ດຫອມ ປະຊາຊົນບ້ານນາທົ່ມ, ເມືອງໄຊທານີ, ທີ່ໄດ້ຮັບຜົນກະທົບຈາກໂຄງການກໍ່ສ້າງທາງລົດໄຟລາວ-ຈີນນັ້ນ, ຄະນະກຳມະການໄກ່ເກ່ຍຂອງນະຄອນຫລວງວຽງຈັນ ໄດ້ຄົ້ນຄ້ວາຕາມລະບຽບການ ແລະ ກົດໝາຍກ່ຽວຂ້ອງແລ້ວ ລາຍລະອຽດສະເໜີໃຫ້ຜູ້ກ່ຽວເຂົ້າໄປພົບກັບຄະນະກຳມະການໄກ່ເກ່ຍຂອງນະຄອນຫລວງວຽງຈັນ.

5. ປະຊາຊົນ, ບ້ານຫ້ອມ, ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ ສ່ອງແສງໃຫ້ລັດຖະບານຮູ້ວ່າ ເສັ້ນທາງແຍກໄປບ້ານດັ່ງກ່າວແມ່ນເປັນຂຸມເລິກ, ໃຫຍ່, ຂີ້ຝຸ່ນໄງ່ ການສັນຈອນໄປມາພົບຄວາມຫຍຸ້ງຍາກ. ດັ່ງນັ້ນ, ຈຶ່ງຂໍໃຫ້ພາກສ່ວນທີ່ກ່ຽວຂ້ອງລົງກວດກາ ແລະ ແກ້ໄຂບັນຫາດັ່ງກ່າວດ້ວຍ.

➢ ຕອບ: ກະຊວງ ຍທຂ ໄດ້ມີໜັງສືທາງລັດຖະການ ສະເໜີທ່ານ ເຈົ້າຄອງນະຄອນຫລວງວຽງຈັນ ເພື່ອຊີ້ນຳພາກສ່ວນກ່ຽວຂ້ອງຂອງອົງການປົກຄອງນະຄອນຫລວງແກ້ໄຂ ຕາມເອກະສານເລກທີ 806/ຍທຂ, ລົງວັນທີ 07 ກໍລະກົດ 2018, ພ້ອມດຽວກັນນັ້ນ ກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນຳໃຫ້ກົມຂົວທາງລົງສົມທົບກັບພະແນກ ຍທຂ ນະຄອນຫລວງວຽງຈັນ ແລະ ຫ້ອງການ ຍທຂ ເມືອງ ລົງກວດກາຕົວຈິງເກັບກຳຂໍ້ມູນ ແລະ ສັງລວມ, ພ້ອມທັງສະເໜີວິທີແກ້ໄຂຕໍ່ຄະນະນຳນະຄອນຫລວງວຽງຈັນ. ຫລັງຈາກ

ນັ້ນ ທ່ານ ເດດສິງຄາມ ທຳມະວົງ ຫົວໜ້າພະແນກ ຍທຂ ນະຄອນຫລວງວຽງຈັນ ໄດ້ຊີ້ແຈ້ງຜົນການແກ້ໄຂໃຫ້ສັງຄົມຮັບຊາບຜ່ານທາງໜັງສືພິມວຽງຈັນໃໝ່ ສະບັບລົງວັນທີ 22/10/2018 ແລະ 29/10/2018 ແລ້ວ ວ່າ: ນະຄອນຫລວງວຽງຈັນ (ນວ) ເປັນເມືອງເອກຂອງລາວ ມີປະຊາຊົນດຳລົງຊີວິດທີ່ໜາແໜ້ນ ລະບົບເສັ້ນທາງມີຈຸດພິເສດທີ່ແຕກຕ່າງຈາກແຂວງອື່ນ ໂດຍສະເພາະແມ່ນການຂະຫຍາຍຕາໜ່າງເສັ້ນທາງໃນຊົນນະບົດ ຊານເມືອງ ແລະ ຂອບເຂດຕົວເມືອງ ເຊິ່ງທົ່ວ ນວ ມີເສັ້ນທາງຍາວທັງໝົດ 2.701,7 ກິໂລແມັດ ໃນນີ້ເສັ້ນທາງປູເບຕົງ 323,7 ກິໂລແມັດ, ປູອັດສະຟານ 167,4 ກິໂລແມັດ, ທາງປູຢາງ 2 ຊັ້ນ 596,2 ກິໂລແມັດ, ທາງປູແຮ່ 1.235,9 ກິໂລແມັດ, ທາງທຳມະຊາດ 378,5 ກິໂລແມັດ. ໄລຍະຜ່ານມາກໍ່ຄືປັດຈຸບັນພະແນກ ຍທຂ ໄດ້ເອົາໃຈໃສ່ໃນຕິດຕາມກວດກາເສັ້ນທາງເປັນປົກກະຕິ ຖ້າໜ້າທາງເປ່ເພເປັນຂຸມເປັນບວກກໍ່ໄດ້ໃຫ້ໜ່ວຍງານປົກປັກຮັກສາເສັ້ນທາງຮີບຮ້ອນໄປແກ້ໄຂທັນທີ ຕົ້ນຕໍເລັ່ງໃສ່ເສັ້ນທາງສາຍຫຼັກໃນຂອບເຂດ 5 ຕົວເມືອງໃນ ນີ້ກໍ່ລວມທັງເສັ້ນທາງຜ່ານບ້ານຫ້ອມ, ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ.

ກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກໄດ້ລົງຕິດຕາມ ແລະ ຊຸກຍູ້ ຊີ້ນຳໃຫ້ພະແນກ ຍທຂ ນະຄອນຫຼວງວຽງຈັນ ໃນນາມເຈົ້າຂອງໂຄງການເອົາໃຈໃສ່ສ້ອມແປງທາງໃນນະຄອນຫລວງວຽງຈັນ ເພື່ອຮັບປະກັນການຄົມມະນາຄົມຂົນສົ່ງ, ອຳນວຍຄວາມສະດວກໃຫ້ປະຊາຊົນໄປມາສະດວກສະບາຍ, ພ້ອມດຽວກັນນີ້ໃນ ປີ 2019 ກະຊວງ ຍທຂ ໄດ້ຈັດແບ່ງງົບປະມານກອງທຶນທາງ ຮ່ວງ 20 % ໃຫ້ບັນດາແຂວງ ແລະ ສຳລັບນະຄອນຫລວງວຽງຈັນ ນຳໃຊ້ເຂົ້າໃນການບູລະນະຮັກສາ ສ້ອມແປງທາງທາງຫລວງທ້ອງຖິ່ນປະຈຳປີ 2019 ຈຳນວນ 7.488.904.000 ກີບ ຕາມໜັງສືເລກທີ 394/ຍທຂ, ລົງວັນທີ 25/4/2019.

6. <u>ປະຊາຊົນ ບ້ານໜອງພະຍາ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ສະເໜີໃຫ້ລັດຖະບານ ຮູ້ວ່າເສັ້ນທາງແຕ່ ບ້ານ ໜອງພະຍາ ຫາ ສາມແຍກ ບ້ານ ສີເກີດ ປະຈຸບັນນີ້ ການສັນຈອນໄປມາພົບຄວາມຫຍຸ້ງຍາກ, ຂີ້ຝຸ່ນຫລາຍທີ່ສຸດ ປະຊາຊົນໄດ້ຮັບຜົນກະທົບໜັກ, ປ່ວຍເປັນພະຍາດປອດແຫ້ງ. ການສ້າງເສັ້ນທາງດັ່ງກ່າວ ແມ່ນໃຊ້ເວລາດົນນານຫລາຍ. ດັ່ງນັ້ນ, ຈຶ່ງຂໍໃຫ້ລັດຖະບານແກ້ໄຂບັນຫາດັ່ງກ່າວໃຫ້ ປະຊາຊົນດ້ວຍ.</u>

➢ <u>ຕອບ:</u> ຄຳຕອບຄືຂໍ້ 2

7. <u>ຕາງໜ້ານັກຮຽນ ໂຮງຮຽນປະຖົມສົມບູນ ແລະ ມັດທະຍົມຕອນຕົ້ນ ສິນໄຊ ສະເໜີໃຫ້ລັດຖະບານຮູ້ວ່າພະນັກງານຂັບລົດເມ ສາຍຕະຫຼາດເຊົ້າ-ທ່າງ່ອນ ຕົ້ນປີ 2019 ເປັນຕົ້ນມາ ບໍ່ປະຕິບັດຕາມໂມງເວລາ ຍ້ອນວ່າພະນັກງານຂັບລົດແມ່ນກິນເງິນເດືອນ, ຜ່ານມາແມ່ນໄດ້ຄິດໄລ່ເງິນເປັນຖ້ຽວ ເຮັດໃຫ້ນັກຮຽນທີ່ມາໃຊ້ບໍລິການຕອນເຊົ້າບໍ່ທັນໂຮງຮຽນ ຖືກຕັດຄະແນນ, ຖືກລົງໂທດວິໄນ ແລະ ບາງມື້ກໍ່ບໍ່ໄດ້ເຂົ້າໂຮງຮຽນ. ນັກຮຽນສ່ວນໃຫຍ່ແມ່ນຈະເຮັດບັດສະມາຊິກ1.500.000 ກີບ/ຄົນ/ປີ ຍ້ອນວ່າລາຄາຖືກກວ່າຈ່າຍເປັນຖ້ຽວ. ດັ່ງນັ້ນ, ຈຶ່ງຂໍໃຫ້ພາກສ່ວນທີ່ກ່ຽວຂ້ອງ ແກ້ໄຂບັນຫາດັ່ງກ່າວດ້ວຍ.</u>

➢ <u>ຕອບ:</u> ລັດວິສາຫະກິດລົດເມນະຄອນຫລວງ ລາຍງານໃຫ້ຊາບວ່າ: ໃນໄລຍະຜ່ານມາແມ່ນລັດວິສາຫະກິດລົດເມນະຄອນຫລວງ ໄດ້ສ້າງລາຍຮັບຈາກການຂົນສົ່ງຜູ້ໂດຍສານເຂົ້າລັດວິສາຫະກິດຂອງຕົນ ດ້ວຍການບໍລິການລົດເມແບບມອບເໝົາຕົວເລກລາຍຮັບຂາດຕົວໃຫ້ແກ່ພະນັກງານຂັບລົດເປັນຜູ້ຮັບຜິດຊອບ ໃນແຕ່ລະສາຍທາງພາຍໃນຕົວເມືອງນະຄອນຫຼວງວຽງຈັນ, ພາຍຫຼັງທີ່ໄດ້ມີການຊ່ວຍເຫຼືອຈາກລັດຖະບານຍີ່ປຸ່ນໂດຍຜ່ານອົງການໄຈກ້າ (JICA) ລັດວິສາຫະກິດລົດເມນະຄອນຫຼວງວຽງຈັນ, ຮ່ວມກັບໂຄງການປັບປຸງປະສິດທິພາບການບໍລິການຂົນສົ່ງສາທາລະນະພາຍໃນຕົວເມືອງນະຄອນຫຼວງວຽງຈັນ ໄລຍະທີ 2 (CITY 2) ເພື່ອເປັນຕົວແບບໃນການນຳໃຊ້ລະບົບການບໍລິຫານແບບໃໝ່ ໂດຍການຫັນປັບປ່ຽນກົນໄກແບບເກົ່າເປັນຮູບແບບໃໝ່ດ້ວຍລະບົບບໍລິຫານມີພະນັກງານກະເປົາລົດເມເກັບເງິນສະເພາະ ສ່ວນພະນັກງານຂັບລົດເມແມ່ນໄດ້ຮັບພຽງແຕ່ເງິນເດືອນພຽງຢ່າງດຽວເທົ່ານັ້ນ.

ຕໍ່ກັບການສະເໜີຂອງປະຊາຊົນດັ່ງກ່າວຂ້າງເທິງ ລັດວິສາຫະກິດລົດເມນະຄອນຫຼວງວຽງຈັນ ໄດ້ລົງສຳຫຼວດເກັບກຳຂໍ້ມູນເຫັນວ່າ: ສະພາບຄວາມແອອັດລົດຕິດຕາມສາຍທາງ, ລົດເມບໍ່ມີເລນສະເພາະ, ການເຂົ້າຈອດຕາມປ້າຍລົດເມມີຄວາມຫຍຸ້ງຍາກຍ້ອນມີລົດສ່ວນຕົວໄປຈອດຕັນ, ບັນຫາລົດເມເປ່ເພສຸກເສີນບໍ່ມີລົດປ່ຽນແທນ, ພະນັກງານຂັບລົດເຈັບເປັນກະທັນຫັນ ແລະ ອື່ນໆ ເຊິ່ງເປັນສາຍເຫດເຮັດໃຫ້ການບໍລິການລົດເມບໍ່ກົງຕໍ່ເວລາ. ສຳລັບການຂາຍບັດຂີ່ລົດເມນະໂຍບາຍລາຄາຖືກໃຫ້ແກ່ນັກຮຽນ, ນັກສຶກສາ ແມ່ນໄດ້ປະຕິບັດຄືເກົ່າ ແລະໄດ້ຈັດລົດເມໃສ່ໃນຊ່ວງເວລາເລັ່ງດ່ວນໃຫ້ທ່ວງທັນກັບເວລາຮຽນ ເພື່ອເປັນການສົ່ງເສີມທັນໃຫ້ມວນຊົນມານຳໃຊ້ລົດສາທາລະນະໃຫ້ຫຼາຍຂຶ້ນ ແລະ ເປັນການຫຼຸດຜ່ອນການນຳໃຊ້ລົດສ່ວນຕົວໃນເມືອງໃຫ້ຫຼຸດລົງ.

**ລັດວິສາຫະກິດລົດເມນະຄອນຫລວງ ມີຄຳເຫັນວ່າ:**

1. ພາຍໃນລັດວິສາຫະກິດລົດເມນະຄອນຫລວງ ກໍຈະເອົາໃຈໃສ່ເຮັດການບໍລິການໃຫ້ດີຂຶ້ນ ເທົ່າທີ່ຈະປະຕິບັດໄດ້
2. ສະເໜີໃຫ້ຄະນະອຳນວຍການແຕ່ລະໂຮງຮຽນກ່ຽວຂ້ອງເຂົ້າມາປະສານສົມທົບປຶກສາຫາລື ກັບລັດສາຫະກິດລົດເມໂດຍກົງ, ເພື່ອຮ່ວມກັນຄົ້ນຄ້ວາຊອກຫາວິທີແກ້ໄຂ ແລະ ໃຫ້ຂໍ້ມູນລາຍລະອຽດຕື່ມ ວ່າໃນຊົ່ວໂມງເວລາໃດແທ້? ທີ່ນັກຮຽນສ່ວນຫຼາຍມາບໍ່ທັນເວລາເຂົ້າຮຽນ ເພື່ອຈະໄດ້ມີການປັບປຸງແກ້ໄຂ ເຮັດໃຫ້ການບໍລິການມີຄວາມສະດວກ, ປອດໄພ, ທ່ວງທັນກັບເວລາໃຫ້ດີຂຶ້ນກວ່າເກົ່າ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບຕາມທາງຄວນດ້ວຍ.

ລັດຖະມົນຕີ

ດຣ ບຸນຈັນ ສິນທະວົງ

<u>ບ່ອນນຳສົ່ງ:</u>

- ທ່ານ ເລຂາທິການສະພາແຫ່ງຊາດ 01 ສະບັບ ເພື່ອຊາບ.
- ທ່ານ ຮອງລັດຖະມົນຕີ ທ່ານລະ 01 ສະບັບ.
- ທ່ານ ຫົວໜ້າກົມປະຊາສຳພັນ ຫສນຍ 01 ສະບັບ.
- ສຳເນົາເກັບມ້ຽນ 02